The Asia Foundation

TERM OF REFERENCE

**ທີ່ປຶກສາສະໜັບສະໜູນການສ້າງແຜນຍຸດທະສາດ, ເຄື່ອງມືຕິດຕາມ**

**ແລະ ຝຶກອົບຮົມການສ້າງແບບຟອມຕິດຕາມ ໃຫ້ກັບສູນກາງສະຫະພັນແມ່ຍິງລາວ**

## ຂໍ້ມູນທົ່ວໄປ

| | |
|---|---|
| ລາຍລະອຽດວຽກ/ບໍລິການ: | ເປັນທີ່ປຶກສາເພື່ອສາສະໜັບສະໜູນການສ້າງແຜນຍຸດທະສາດ, ອອກແບບ ແລະ ຝຶກອົບຮົມການສ້າງແບບຟອມປະເມີນກວດກາ, ສ້າງຖານຂໍ້ມູນ ໃຫ້ແກ່ກົມກວດກາ, ສະຫະພັນແມ່ຍິງ |
| ຊື່ໂຄງການ: | ໂຄງການ ສ້າງຄວາມເຂັ້ມແຂງໃຫ້ສະຫະພັນແມ່ຍິງລາວ ໃນຜັນຂະຫຍາຍແຜນປະຕິບັດງານພາກພື້ນອາຊຽນ ວ່າດ້ວຍ ແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ |
| ຊື່ຕໍາແໜ່ງ: | ທີ່ປຶກສາໄລຍະສັ້ນ ເພື່ອສະໜັບສະໜູນວຽກງານຕິດຕາມກວດກາ ໃຫ້ແກ່ກົມກວດກາ, ສະຫະພັນແມ່ຍິງ |
| ປະເພດສັນຍາ: | ທີ່ປຶກສາສ່ວນບຸກຄົນ ຫຼື ບໍລິສັດ |
| ລະດັບຂອງວຽກ: | ທີ່ປຶກສາທ້ອງຖິ່ນໄລຍະສັ້ນ |
| ສະຖານທີ່ເຮັດວຽກ: | ນະຄອນຫຼວງວຽງຈັນ, ມີຄວາມເປັນໄປໄດ້ທີ່ຈະເດີນທາງເຮັດວຽກຕ່າງແຂວງ |
| ໄລຍະເວລາຂອງວຽກ: | ອີງຕາມການຄໍານວນຈໍານວນມື້ ຕາມບົດສະເໜີຂອງທີ່ປຶກສາ ແລະ ການຕົກລົງກັນຂອງສອງຝ່າຍ |
| ຄາດຄະເນ ວັນທີເລີ່ມວຽກ: | ເດືອນມິຖຸນາ 2026 |
| ອົງການ: | ມູນນິທິເອເຊຍ ສປປ ລາວ<br>Khamsa Homsombath, Email:<br>khamsa.homsombath@asiafoundation.org<br>Vilaiphone Phongsila (Ms), Email:<br>vilaiphone.phongsila@asiafoundation.org<br>Or Lattanaphone Sitphasai:<br>lattanaphone.sitphasai@asiafoundation.org |

## I. ຄວາມເປັນມາ

AMPLIFY ແມ່ນໂຄງການລິເລີ່ມວຽກງານແມ່ຍິງ, ສັນຕິພາບ ແລະ ຄວາໝັ້ນຄົງ ລະດັບພາກພື້ນ 5 ປີ ທີ່ແນໃສ່ແກ້ໄຂຜົນກະທົບໃນລະດັບທີ່ແຕກຕ່າງກັນ ຂອງຄວາມຂັດແຍ່ງ ແລະ ການຄຸກຄາມຕໍ່ຄວາມໝັ້ນຄົງຂອງມະນຸດ ຕໍ່ແມ່ຍິງໃນພາກພື້ນອາຊີຕາເວັນອອກສຽງໃຕ້ ຊຶ່ງໄດ້ຮັບທຶນຈາກກະຊວງການຕ່າງປະເທດ ແລະ ການຄ້ານິວຊີແລນ ແລະ ຈັດຕັ້ງປະຕິບັດໂດຍ ມູນນິທິເອເຊຍ. ນັບແຕ່ເດືອນມັງກອນ 2026, ແຜນງານ

The Asia Foundation

AMPLIFY ຮ່ວມກັບສະຫະພັນແມ່ຍິງລາວ ຈັດຕັ້ງປະຕິບັດໂຄງການ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະຫະພັນແມ່ຍິງລາວ ໃນການຜັນຂະຫຍາຍແຜນປະຕິບັດງານພາກພື້ນອາຊຽນ ວ່າດ້ວຍ ແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ ນັບຕັ້ງແຕ່ເດືອນ ມີນາ 2026.

ໂດຍອີງຕາມແຜນກິດຈະກຳໂຄງການ, ແຜນງານ AMPLIFY ຮ່ວມກັບສະຫະພັນແມ່ຍິງລາວ ມີຈຸດປະສົງສ້າງຄວາມອາດສາມາດໃຫ້ກັບບຸກຄະລາກອນ ຂອງກົມກວດກາ, ສູນກາງສະຫະພັນແມ່ຍິງລາວ ໃນການນຳໃຊ້ກອບວຽກງານຕິດຕາມກວດກາ ແລະ ການປະເມີນຜົນ ເຂົ້າໃນການຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາແມ່ຍິງລາວ 5 ປີ ຄັ້ງທີ IX. ດັ່ງນັ້ນ, ແຜນງານ AMPLIFY ແລະ ສູນກາງສະຫະພັນແມ່ຍິງລາວ ຈຶ່ງມີແຜນຈັດຈ້າງຊ່ຽວຊານ ເພື່ອຊ່ວຍໃນວຽກງານດັ່ງກ່າວ ເຊິ່ງຈະກວມເອົາ ການສ້າງຂອບຕິດຕາມກວດກາ (Logframe) ໂດຍອີງໃສ່ຂອບວຽກທີ່ມີຢູ່, ການອອກແບບສ້າງຮ່າງແບບຟອມ ແລະ ເຄື່ອງມືໃນການເກັບກຳຂໍ້ມູນ, ການຕິດຕາມ, ການປະເມີນຜົນ ແລະ ການລາຍງານ, ການຝຶກອົບຮົມສ້າງຂີດຄວາມສາມາດກ່ຽວກັບການນຳໃຊ້ເຄື່ອງມື ແລະ ການສ້າງຖານຂໍ້ມູນໃນການເກັບກຳຂໍ້ມູນ ໃຫ້ກັບກົມກວດກາ, ສູນກາງສະຫະພັນແມ່ຍິງລາວ, ເພື່ອນຳໃຊ້ເຂົ້າໃນການເກັບກຳຂໍ້ມູນ ແລະ ການລາຍງານ ຜົນການຜັນຂະຫຍາຍແຜນພັດທະນາແມ່ຍິງລາວ ແລະ ບັນດານິຕິກຳ ທີ່ຕິດພັນກັບວຽກງານພັດທະນາແມ່ຍິງ ໃນແຕ່ລະໄລຍະ.

## II. ຈຸດປະສົງຂອງໜ້າວຽກ

- ເພື່ອທົບທວນກອບວຽກງານຕິດຕາມກວດກາ ແລະ ການປະເມີນຜົນ ຂອງສູນກາງສະຫະພັນແມ່ຍິງລາວ 2026-2030 ເພື່ອສ້າງຂອບການຕິດຕາມກວດກາ (Logframe) ໃຫ້ມີຄວາມເຂົ້າໃຈງ່າຍ ແລະ ສະດວກໃນການຄຸ້ມຄອງ, ປະສານງານ, ການຕິດຕາມກວດກາ, ການປະເມີນຜົນ ແລະ ນຳໄປໃນໃຊ້ລາຍງານຄວາມຄືບໜ້າຂອງແຜນພັດທະນາແມ່ຍິງລາວ.
- ເພື່ອທົບທວນ ແລະ ອອກແບບຮ່າງແບບຟອມການຕິດຕາມກວດກາ, ການປະເມີນຜົນ, ການເກັບກຳຂໍ້ມູນ ແລະ ການລາຍງານ ການຈັດຕັ້ງປະຕິບັດກິດຈະກຳ ແລະ ຄວາມຄືບໜ້າຕົວຊີ້ວັດ ຂອງແຜນພັດທະນາແມ່ຍິງລາວ ແລະ ອື່ນໆ.
- ເພື່ອສ້າງຖານເກັບກຳຂໍ້ມູນທີ່ໄດ້ຈາກການຕິດຕາມກວດກາ ແລະ ປະເມີນ ໃຫ້ເປັນລະບົບ ແລະ ສາມາດນຳໃຊ້ໃນການວິເຄາະ ເພື່ອລາຍງານຄວາມຄືບໜ້າຂອງ ແຜນພັດທະນາແມ່ຍິງລາວ;
- ຂະບວນການຕິດຕາມກວດກາ, ປະເມີນ ແລະ ລາຍງານ ຂອງພາກສ່ວນຕ່າງໆ ຕໍ່ກົມກວດກາ ໄດ້ຮັບການອອກແບບໃຫ້ມີຄວາມຄ່ອງຕົວ ແລະ ສອດຄ່ອງກັບວິທີການລາຍງານຂອງ ສະຫະພັນແມ່ຍິງລາວ
- ເພື່ອສ້າງທັກສະ ແລະ ຄວາມອາດສາມາດໃຫ້ກັບວິຊາການຂອງກົມກວດກາ ແລະ ກົມທີ່ກ່ຽວຂ້ອງ ຂອງສູນກາງສະຫະພັນແມ່ຍິງລາວ ໃນການນຳໃຊ້ເຄື່ອງມືການຕິດຕາມກວດກາ ແລະ ປະເມີນ, ການນຳໃຊ້ຖານຂໍ້ມູນ ແລະ ການວິເຄາະຂໍ້ມູນ ເພື່ອລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາແມ່ຍິງລາວ;

## III. ກອບໜ້າວຽກ ແລະ ເວລາ

The Asia Foundation

| ໜ້າວຽກ | ຜົນທີ່ຄາດວ່າຈະໄດ້ຮັບ | ຂອບເວລາ |
|---|---|---|
| 1. ສະໜັບສະໜູນການສ້າງ ຂອບການຕິດຕາມກວດກາ (Logframe) ໃຫ້ແກ່ກົມກວດກາ ເພື່ອນໍາໃຊ້ໃນການຕິດຕາມປະເມີນ. | - ຂອບການຕິດຕາມກວດກາ (Logframe) ໄດ້ສໍາເລັດ ແລະ ກົມກວດກາ ສາມາດນໍາໄປໃຊ້ໄດ້ | ທ້າຍເດືອນມິຖຸນາ-ກໍລະກົດ 2026 |
| 2. ສະໜັບສະໜູນ ການ ຮ່າງຟອມຕິດຕາມກວດກາ, ຮ່າງບົດລາຍງານ ໂດຍຜ່ານການປຶກສາຫາລື ແລະ ຮ່ວມມືກັບກົມກວດກາ ແລະ ແຜນງານ AMPLIFY ໃນກອງປະຊຸມສ້າງຄູ່ມືຕິດຕາມກວດກາ | - ຮ່າງແບບຟອມຕິດຕາມກວດກາ ໄດ້ສໍາເລັດ ພ້ອມສໍາລັບການທົດລອງນໍາໃຊ້ | ກໍລະກົດ 2026 |
| 3. ຮ່ວມມືກັບ ກົມກວດກາ ສສຍລ ເພື່ອສ້າງຖານເກັບກໍາຂໍ້ມູນ ຜົນຂອງການຕິດຕາມກວດກາ ທີ່ນໍາໃຊ້ງ່າຍ ບໍ່ຊັບຊ້ອນ | - ຖານຂໍ້ມູນ ທີ່ນໍາໃຊ້ງ່າຍ ແລະ ບໍ່ຊັບຊ້ອນໄດ້ຮັບການສ້າງ ພ້ອມນໍາໃຊ້ | ສິງຫາ 2026 |
| 4. ຮ່ວມມືກັບກົມກວດກາ ໃນການອອກແບບຂະບວນການຕິດຕາມກວດກາ, ປະເມີນ ແລະ ລາຍງານ ຂອງແຕ່ລະພາກສ່ວນ ຕໍ່ກົມກວດກາ | - ຂະບວນການຕິດຕາມກວດກາ, ປະເມີນ ແລະ ລາຍງານ ໄດ້ຮັບການອອກແບບ ໃຫ້ມີຄວາມລຽບງ່າຍ, ມີປະສິດທິພາບ ແລະ ນໍາໃຊ້ໄດ້ແທ້. (ອາດຈະເຮັດເປັນແຜນວາດຂະບວນການ) | ສິງຫາ - ກັນຍາ 2026 |
| 5. ຝຶກອົບຮົມໃຫ້ແກ່ກົມກວດກາ ແລະ ກົມກ່ຽວຂ້ອງອື່ນໆ ກ່ຽວກັບ<br>- ຫຼັກການ ແລະ ວິທີການຕິດຕາມກວດກາ<br>- ຂະບວນການຕິດຕາມ, ປະເມີນ ແລະ ລາຍງານ<br>- ການນໍາໃຊ້ແບບຟອມ<br>- ການບັນທຶກຂໍ້ມູນ ແລະ ການນໍາໃຊ້ຖານຂໍ້ມູນ<br>- ການວິເຄາະຂໍ້ມູນ | - ຜູ້ເຂົ້າຮ່ວມ ມີຄວາມເຂົ້າໃຈກ່ຽວກັບຫຼັກການ, ຂະບວນການ, ແບບຟອມ ແລະ ການວິເຄາະຂໍ້ມູນ ທີ່ຕິດພັນກັບວຽກຕິດຕາມກວດກາ. | ກັນຍາ 2026 |

ໝາຍເຫດ: ໄລຍະເວລາ ແມ່ນສາມາດປັບປ່ຽນໄດ້ ຕາມການອອກແບບຂອງທີ່ປຶກສາ ແລະ ການເຫັນດີຈາກກົມກວດກາ ສສຍລ.

**IV. ຄາດຄະເນຜົນໄດ້ຮັບ:**

The Asia Foundation

ພາຍຫຼັງສຳເລັດກິດຈະກຳນີ້ ຄາດວ່າ ກົມກວດກາ ຂອງ ສສຍລ ຈະມີຂອບການຕິດຕາມກວດກາ ເພື່ອນຳໃຊ້ໃນການຕິດຕາມຕົວຊີ້ວັດຂອງແຕ່ລະເປົ້າໝາຍ ໃນແຜນພັດທະນາແມ່ຍິງລາວ 2026-2030, ມີແບບຟອມເພື່ອນຳໃຊ້ໃນການຕິດຕາມກວດກາ ແລະ ເກັບກຳຂໍ້ມູນທີ່ເປັນເອກະພາບ ແລະ ນຳໃຊ້ໃນຂົງເຂດສະຫະພັນແມ່ຍິງລາວຂັ້ນສູນກາງ ແລະ ທ້ອງຖິ່ນ, ມີຖານຂໍ້ມູນທີ່ສາມາດບັນທຶກຂໍ້ມູນ ແລະ ວິເຄາະຄວາມຄືບໜ້າຂອງແຕ່ລະເປົ້າໝາຍລວມເຖິງມີຄວາມສາມາດ ແລະ ຄວາມເຂົ້າໃຈທີ່ຈະນຳໃຊ້ເຄື່ອງມື ແລະ ຖານຂໍ້ມູນດັ່ງກ່າວ.

ພ້ອມນັ້ນ, ກໍຄາດວ່າ ຂະບວນການຕິດຕາມກວດກາ, ປະເມີນ ແລະ ລາຍງານ ຈະໄດ້ຮັບການອອກແບບໃຫ້ມີຄວາມສອດຄ່ອງ, ຄ່ອງຕົວ ແລະ ເຂົ້າໃຈງ່າຍ ທີ່ສາມາດເປັນຕົວອີງໃນການປະສານງານ ແລະ ເຮັດວຽກຮ່ວມກັບພາກສ່ວນອື່ນໆ ໃຫ້ສະດວກ ແລະ ງ່າຍຂຶ້ນ ໃນການເກັບກຳຂໍ້ມູນຕ່າງໆ.

## V. ຄຸນສົມບັດ ແລະ ປະສົບການ

- ຕ້ອງມີປະສົບການເຮັດວຽກດ້ານການຕິດຕາມກວດກາ, ປະເມີນ ແລະ ລາຍງານ ຢ່າງໜ້ອຍ 5 ປີ
- ຈົບການສຶກສາລະດັບປະລິນຍາໂທ ໃນຂົງເຂດທີ່ກ່ຽວຂ້ອງ
- ມີຄວາມເຂົ້າໃຈກ່ຽວກັບຂະບວນການເຮັດວຽກ, ໂຄງຮ່າງ ແລະ ລະບົບຂອງໜ່ວຍງານລັດຖະບານ
- ມີຄວາມສາມາດທີ່ຈະອອກແບບຂອບຕິດຕາມ, ເຄື່ອງມືຕິດຕາມກວດກາ, ຝຶກອົບຮົມ ແລະ ສ້າງຖານຂໍ້ມູນ ລວມທັງ  digitalization M&E tools.
- ມີຄວາມພ້ອມທີ່ຈະເລີ່ມວຽກໃນເວລາທີ່ກຳນົດ

## VI. ການສົ່ງແບບຟອມສະໝັກ

**ຜູ້ມີຄວາມສົນໃຈ ແມ່ນສາມາດສົ່ງແບບຟອມສະໝັກ ປະກອບດ້ວຍ Short CV and Technical proposal with budget ມາທີ່ອີເມວ ບໍ່ໃຫ້ກາຍວັນທີ  23 ມິຖຸນາ 2026:**

Vilaiphone Phongsila (Ms), Email: vilaiphone.phongsila@asiafoundation.org

CC: Khamsa Homsombath, Email: khamsa.homsombath@asiafoundation.org

CC: Lattanaphone Sitphasai: lattanaphone.sitphasai@asiafoundation.org

- ເອກະສານຄັດຕິດ: ກອບວຽກງານຕິດຕາມກວດກາ ແລະ ການປະເມີນຜົນ ຂອງສູນກາງສະຫະພັນແມ່ຍິງລາວ 5 ປີ 2026-2030